# ບົດບັນທຶກເຮັດວຽກ

## ລະຫວ່າງພະແນກສຶກສາທິການແລະກິລາແຂວງ ຄຳມ່ວນ ສປປ ລາວ ກັບວິທະຍາໄລແພດສາດຮ່າຕິ້ງ, ວ/ລ ວັດທະນາທຳ,ກິລາ ແລະ ທ່ອງທ່ຽວຫວຽນຢຸ, ວ/ລ ເຕັກນິກວິຊາຊີບ ແຂວງ ຮ່າຕິ້ງ ສສ ຫວຽດນາມ .

ໃນວັນທີ 12 ເດືອນ ພຶດສະພາ ( 5 ) 2017 ໃນເວລາ 9:00 ໂມງ ຢູ່ທີ່ຫ້ອງປະຊຸມພະແນກສຶກສາທິການ ແລະ ກິລາ ແຂວງ ຄຳມ່ວນ ສປປລາວ ໄດ້ຈັດຕັ້ງກອງປະຊຸມພົບປະແລກປ່ຽນປຶກສາຫາລືກ່ຽວກັບແຜນການກໍ່ສ້າງຊັບພະຍາກອນມະນຸດ ໃນສົກປີ 2017-2018 ລະຫວ່າງພະແນກສຶກສາທິການ ແລະ ກິລາແຂວງ ຄຳມ່ວນ ກັບບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ້ງ ສສ ຫວຽດນາມ ມີຜູ້ເຂົ້າຮ່ວມຄື:

➢ ຄະນະຜູ້ແທນແຂວງຄຳມ່ວນລວມມີ :

1. ທ່ານ ສີໄຊ ແກ້ວໄກຖິ່ນ ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ
2. ທ່ານ ຫົວໜ້າຂະແໜງອາຊີວະສຶກສາ ແລະ ຝຶກອົບຮົມວິຊາຊີບ
3. ທ່ານ ຫົວໜ້າຫ້ອງການບໍລິຫານ

➢ ຝ່າຍແຂວງຮ່າຕິ້ງປະກອບມີ :

1. ທ່ານ ຫງວຽນວັນ ຮອງອຳນວຍການວິທະຍາໄລແພດສາດ
2. ທ່ານ ນາງ ດັ້ງຖີ້ຖຸຍຮັ່ງ ຮອງອຳນວຍການວິທະຍາໄລວັດທະນາທຳ,ກິລາແລະທ່ອງທ່ຽວຫງຽນຢູຮ່າຕິ້ງ
3. ທ່ານ ນາງ ຫງວຽນຖີ້ແທັງຢ່ານ ຮອງຫົວໜ້າຫ້ອງຄັດເລືອກນັກສຶກສາ ວິທະຍາໄລເຕັກໂນໂລຊີຮ່າຕິ້ງ
4. ທ່ານ ເຢືອງຫົວຮວ່າ ຮອງຫົວໜ້າຫ້ອງຈັດຕັ້ງ-ບໍລິຫານ ວິທະຍາໄລເຕັກໂນໂລຊີຮ່າຕິ້ງ
5. ທ່ານ ເລຈ້ອງຮ່ຽນ ພະນັກງານແປພາສາພະແນກການຕ່າງປະເທດ ແຂວງຮ່າຕິ້ງ

❖ **ເນື້ອເຮັດວຽກ:**

1. ສະຫລຸບວຽກງານຮ່ວມມືລະຫວ່າງສອງຝ່າຍໃນ ປີ 2016 ແລະປີ 2017
2. ວິທະຍາໄລແພດສາດຮ່າຕິ້ງ,ວລ ວັດທະນາທຳ,ກິລາ ແລະ ທ່ອງທ່ຽວຫວຽນຢູ,ວລ ເຕັກນິກວິຊາຊີບ ໄດ້ຮັບການກໍ່ສ້າງນັກຮຽນທີ່ຮຽນຈົບຊັ້ນ ມປາຍ ( ມ7 )ຂອງແຂວງ ຄຳມ່ວນ ມາຮຽນພາສາຫວຽດນາມກັບບັນດາວິທະຍາໄລອ້ອມຂ້າງແຂວງ.
3. ເນື້ອໃນຮ່ວມມືຜັນຂະຫຍາຍໃນປີ 2017 ແລະ ໃນຊຸມປີຕໍ່ໜ້າລະຫ່ວາງພະແນກ ສກຂ ຄຳມ່ວນ ກັບບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ.
    a. ສືບຕໍ່ຜັນຂະຫຍາຍບົດບັນທຶກການຮ່ວມມືກໍ່ສ້າງທີ່ທັງສອງຝ່າຍໄດ້ລົງນາມຮ່ວມກັນ.
    b. ສືບຕໍ່ກໍ່ສ້າງນັກສຶກສາຮຽນຈົບຊັ້ນມັດທະຍົມສຶກສາຕອນປາຍ (ມ7) ຄຳມ່ວນ ມາຮຽນພາສາຫວຽດ ແລະ ວິຊາສະເພາະຢູ່ບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ ສສ ຫວຽດນາມ;
    c. ແຕ່ລະປີບັນດາວິທະຍາໄລອ້ອມຂ້າງແຂວງຮ່າຕິ່ງ ສສ ຫວຽດນາມຈະແຈ້ງການລະອຽດໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ຄຳມ່ວນຊາບກ່ຽວກັບການຮັບກໍ່ສ້າງເປັນຕົ້ນແມ່ນຄ່າໃຊ້ຈ່າຍຕ່າງໆ.
    d. ເນື້ອໃນລາຍລະອຽດການຮ່ວມມື ລະຫວ່າງ ສອງຝ່າຍຈະໄດ້ດຳເນີນການ ລົງນາມບົດບັນທຶກຕາມທີ່ຫຼັງ.

4. ດ້ານນະໂຍບາຍ

- ວິທະຍາໄລແພດສາດ ໃນ 10 ຄົນ ໂຮງຮຽນຍົກເວັ້ນຄ່າຮຽນ, ຄ່າຫໍພັກ 1 ຄົນ (ຈົບຈົບ)

- ວິທະຍາໄລກິລາ,ທ່ອງທ່ຽວທາງວຽນຢູ່ 10 ຄົນ ໂຮງຮຽນຍົກເວັ້ນຄ່າຮຽນ,ຄ່າຫໍພັກ 2 ຄົນ (ຈົບຈົບ)

- ວິທະຍາໄລເຕັກນິກວິຊາຊີບ ໃນ 10 ຄົນຂຶ້ນໄປໃນຂະແໜງດຽວ, ໂຮງຮຽນຈະຍົກເວັ້ນຄ່າຮຽນ, ຄ່າຫໍພັກໃຫ້ 2 ຄົນ (ຈົບຈົບ).

ບົດບັນທຶກສະບັບນີ້ໄດ້ສ້າງ 02 ສະບັບເປັນພາສາລາວ, ພາສາຫວຽດ 01 ສະບັບ ແຕ່ລະຝ່າຍຮັກສາໄວ້ ຝ່າຍລະ 01 ສະບັບ ແຕ່ລະສະບັບລ້ວນແຕ່ມີຄຸນຄ່າເທົ່າທຽມກັນ.

ຄຳມ່ວນ, ວັນທີ 12 ພຶດສະພາ 2017

| ຕາງໜ້າພະແນກ ສກຂ ຄຳມ່ວນ | ຕາງໜ້າ ບັນດາວິທະຍາໄລອ້ອມຂ້າງແຂວງທ່າຕຶ້ງ |
|---|---|
| **ຫົວໜ້າພະແນກ ສກຂ** | **ຮອງອຳນວຍການວິທະຍາໄລແພດສາດ** |
| **ສີໄຮ ແກ້ວໄກຖິ່ນ** | **ຫງວຽນ ວັນ** |